# ບັນທຶກເລື່ອງຕຳນານຫຍໍ້

# ຂອງ

# ພຣະບາງພຣະພຸທທະລາວັນ

ພຣະບາງ ຫຼື ພຣະພຸທທະລາວັນ ເປັນພຣະພຸທທະຮູບອົງຄ໌ ສັກສິດ ອົງຄ໌ຫນຶ່ງ ຂອງໂລກທີ່ພວກລາວເຮົາ ແລະ ພຸທທະສາສນິກກະຊົນທົ່ວໂລກ ໄດ້ນັບຖືແລະເຄົາຣົບບູຊາ ສຳຣັບ ຊາວລາວນັ້ນຖືເປັນອົງຄ໌ມິ່ງຂວັນຂອງປະເທດລ້ານຊ້າງ ພຣະພຸທທະຮູບອົງຄ໌ນີ້ ແມ່ນໄດ້ສ້າງຫລໍ່ຫລອມດ້ວຍ ໂລຫະ 5 ຢ່າງ ທີ່ໃນຕຳນານເອີ້ນວ່າ (ປັນຈະໂລຫະ) ແລະ ສ່ວນມາກແມ່ນໂລຫະ ທອງຄຳ ຫຼື ຄຳ ຊຶ່ງຕັນ ທັ້ງພຣະອົງຄ໌ ໃນລັກສະນະທ່າ ຢືນ ມີພຣະກອນທັງສອງຂ້າງແນບກັບພຣະວໍຣະກາຍ ເດ່ພຣະກອນສ່ວນປາຍໄປທາງຂ້າງຫນ້າ ຍົກພຣະຫັດໂດຍປາຍນີ້ວດັດຊະນີຊີ້ຂຶ້ນທາງເບື້ອງບົນ ໃຈພຣະຫັດເບີກໄປທາງຂ້າງຫນ້າ ພຣະບາງ ມີນ້ຳຫນັກສຸດທິ ປະມານ 68 ກິໂລກັຣມ ແລະ ມີຄວາມສູງ ປະມານ 70 ເຊັນຕິແມຕ ພຣະບາງ ໄດ້ມາປະດິດສະຖານຢູ່ທີ່ນະຄອນວັດ-ນະຄອນທົມ ໃນສັຕຕະວັດທີ 9 ໂດຍແມ່ນພຣະຣາຊາແຫ່ງ ກຸງລັງກາສິງຫົນປະເທດ ເປັນຜູ້ໄດ້ຖວາຍເປັນຂອງຂວັນຣາຊບັນນາການ ໃນການເຜີຍແຜ່ພຣະພຸທທະສາສນາ ແດ່ພຣະເຈົ້າອິນທະວໍຣະມັນ ທີ່1 ພຣະຣາຊາແຫ່ງກັມພຸດປະເທດ(ຂເມນ)ກະສັຕຜູ່ສ້າງນະຄອນວັດ-ນະຄອນທົມ ຈາກນັ້ນ ພຣະບາງ ໄດ້ຖືກມອບເປັນຂອງຂວັນຕໍ່ ແດ່ຣາຊອານາຈັກລ້ານຊ້າງ ໃນປີ ຄ.ສ 1355 (ພ.ສ. 1898) ໂດຍແມ່ນພຣະມະຫາຣາຊາແຫ່ງກັມພຸດປະເທດ ຄື ພຣະເຈົ້າມະຫາຊີວິດ ປາຣະມັນທະເຂນະຣາຊາ ມອບຖວາຍເປັນຂອງຂວັນຂອງພຣະອົງຄ໌ຄືພຣະບາດສົມເດັດພຣະເຈົ້າຟ້າເລີດຫລ້າທໍນີມະຫາຣາຊ (ເຈົ້າຟ້າງຸ້ມ) ໂດຍມີພຣະປະສົງໃນການເຜີຍແຜ່ພຣະພຸທທະສາສນາຂຶ້ນມາທາງ ອານາຈັກລ້ານຊ້າງ ແລະ ເພື່ອເປັນການຜ່ອນຄາຍວີຣິຍະ ອັນຫ້າວຫານ ແລະ ສຽບຂາດ ຂອງ ພຣະບາດສົມເດັດ ພຣະເຈົ້າຟ້າງຸ້ມ ຜູ້ຊຶ່ງຊົງເປັນນັກຣົບທີ່ ເກັ່ງກ້າສາມາດ ບໍ່ຢ່ອນຢ້ານສິ່ງໃດຫມົດ ແລະ ມີອຳນາດບາຣະມີເປັນທີ່ເດັດຂາດ ແລະ ເກັງຂາມ ໄປທົ່ວທຸກທິດສານທິດ ນອກຈາກນັ້ນ ພຣະເຈົ້າກຸງກັມພູຊາຍັງໄດ້ສົ່ງຄະນະ ທັມມະທູດ ແລະ ຄະນະນັກປາດ ຜູ້ຊ່ຽວຊານ ໃນວິຊາການຕ່າງໆ ມາພ້ອມດ້ວຍ ດັ່ງກ່າວໄວ້ໃນຕຳນານ ໃນການເຜີຍແຜ່ ພຣະພຸທທະສາສນາ ຂຶ້ນມາ ລາວ ດັ່ງນີ້ :

- ພຣະທັມມະທູດ 20 ຕົນ ຊຶ່ງເປັນນັກບວດ (ພຣະສົງຄ໌) ອົງຄ໌ທີ່ຊ່ຽວຊານທີ່ສຸດ ໃນດ້ານຄຳສອນພຣະທັມມະ ນຳໂດຍ ພຣະມະຫາເທບລັງກາ .
- ນັກປາດ ແລະ ຜູ້ຊ່ຽວຊານໃນວິຊາການຕ່າງໆ 3.000 ຄົນ ເປັນຕົ້ນ ເປັນຊ່າງກໍ່ສ້າງ ຊ່າງຫລໍ່ຫລອມໂລຫະ ຊ່າງຕີເຫັລກ ຊ່າງຕີເງິນຕີຄຳ ຊ່າງຕຳຜ້າແພ ຊ່າງແຕ້ມລວດລາຍ ແລະ ຄະນະດຸຣິຍາງນາຕະສິນ ປະກອບດ້ວຍ ຄູສອນຟ້ອນລຳ ຄູສອນການຂັບຮ້ອງ ຄູສອນຜູ້ແອບຝຶກເລັ່ນໂຂນ-ລະຄອນ ອີເກ ຊຶ່ງຮວ່ມທັງຫມົດ ປະມານ 5.000 ຄົນ ຊຶ່ງມີຈຳນວນເທົ່າກັບຣາສດອນ 4 ຫມູ່ບ້ານໃຫ່ຍ ຂອງຂເມນ .
- ພຣະສົງຄ໌ສາວົກ 1.000 ຕົນ ພ້ອມດ້ວຍ ຂ້າຣາຊບໍຣິພານເສນາອາມາຕ ຜູ້ຊ່ຽວຊານໃນການຈັດຣະບຽບການປົກຄອງມົນທຽນບານ ແລະ ບໍຣິຫານບ້ານເມືອງ ແລະ ນາງສນົມຮັບໃຊ້ ຂອງ ເຈົ້າຍິງ ແກ່ນແກ້ວເທວີ (ແກ້ວລອດຟ້າ) ຣາຊະກຸມມາຣີ ຂອງພຣະອົງຄ໌ ທີ່ໄດ້ເປັນອົງຄອັຄຣະມະຫາເທວີ ຂອງພຣະບາດສົມເດັດພຣະເຈົ້າຟ້າງຸ້ມ ຫຼື ພະບາດສົມເດັດພຣະເຈົ້າຟ້າເລີດຫລ້າທໍຣະນີຟ້າງຸ້ມມະຫາຣາຊ (1)

ຄະນະທັມມະທູດ ແລະ ຜູ້ຊ່ຽວຊານ ເລົ່ານີ້ແມ່ນພາຍໃຕ້ການນໍາພາ ແລະ ໃນຄວາມຮັບຜິດຊອບຂອງພຣະມະຫາ ປາສະມັນທະ ມະຫາເຖຣະ ແລະພ້ອມກັບ ອັນເຊີນ ເອົາພຣະໄຕຣປິດົກ ຕົ້ນພຣະສີມະຫາໂພ ແລະ ພຣະພຸທທະຮູບອົງສັກສິດທີ່ສຸດ ຄື *ພຣະບາງພຸທທະລາວັນ* ເພື່ອເປັນສີຣິມົງຄົນ ຄຸ້ມຄອງໃນການແຜ່ອໍານາດ ຂອງຣາຊບຸດເຂີຍ ແລະ ພຣະຣາຊທິດາ ນອກຈາກນັ້ນ ເພື່ອໄວ້ເປັນທີ່ ສັກກາຣະບູຊາ ຂອງ ພະສົກນິກອນແຫ່ງຣາຊອານາຈັກລ້ານຊ້າງ .

(1) ພຣະບາດສົມເດັດພຣະເຈົ້າຟ້າເລີດຫລ້າທໍຣະນີ ຟ້າງຸ້ມມະຫາຣາຊ ເປັນພຣະຣາຊໂອຣົດອົງໃຫ່ຍຂອງ ຂຸນຜີຟ້າ ຜູ້ເປັນພຣະຣາຊໂອຣົດອົງດຽວ ຂອງ ພຣະຍາ ສຸວັນນະຄໍາຜົງ ເຈົ້າຄອງນະຄອນ ເມືອງຊວາ (ຫລວງພຣະບາງ). ຂຸນຜີຟ້າ ໄດ້ກະທໍາຜິດຣາຊປະເພນີ ໂດຍໄດ້ມີການກະທໍາແບບຊູ້ສາວ ກັບ ນາງເອີກແລງ ຫຼື ອົກຄອງ ຜູ້ເປັນສນົມ ໃນຣາຊສໍານັກຂອງພຣະຍາສຸວັນນະຄໍາຜົງ ດ້ວຍເຫດດັ່ງກ່າວ ຂຸນຜີຟ້າ ຈຶ່ງຖືກພະຍາສຸວັນນະຄໍາຜົງ ອົງເປັນຣາຊບິດາ ລົງໂທດໂດຍຂັບໄລ່ໄສສົ່ງອອກຈາກຣາຊອານາຈັກ ຕາມກົດມົນທຽນບານ ຂຸນຜີຟ້າ ໄດ້ນໍາເອົາ ຣາຊບຸດອົງໃຫ່ຍ ຂອງຕົນ ຄື ເຈົ້າຟ້າງຸ້ມ ພ້ອມດ້ວຍ ຂ້າຣາຊບໍຣິພານ ລົງເຮືອແພ ລ່ອງຕາມລໍາແມ່ນ້ຳຂອງ ແຕ່ ເມືອງຊວາ ຈົນເຖິງແກ້ງຫລີຜີ ທີ່ບ້ານເວີນຄາມ ນະທີ່ນັ້ນ ໄດ້ມີພຣະພິກສຸສົງຄ ທີ່ໄດ້ລົງມາອາບນ້ຳໄດ້ເຫັນເປັນທີ່ມະຫັດສະຈັນ ທີ່ ໄດ້ເຫັນແພລອງລອຍ ທວນກະແສນ້ຳເວີນເຂົ້າມາຈອດທີ່ທ່ານ້ຳ ພຣະສົງຄ໌ຈຶ່ງໄດ້ທູນຖາມຕົ້ນປາຍສາຍເຫດ ເມື່ອຊາບຄວາມຈິງແລ້ວ ພຣະສົງຄ໌ເລົ່ານັ້ນໄດ້ນໍາຄວາມເຂົ້າໄປຂາບບັງຄົມທູນ ພຣະເຈົ້າກຸງກັມພູຊາ ທີ່ນະຄອນວັດ-ນະຄອນທົມ ພຣະອົງຄ໌ຈຶ່ງໄດ້ໃຫ້ຫມໍໂຫນຫມໍທວາຍ ທໍາການທໍານາຍເບິ່ງຖານະກະກຸມ ວາສນາຂອງຫນໍ່ກະສັຕລ້ານຊ້າງ ແລະໄດ້ຄວາມວ່າ ເປັນຜູ້ມີບຸນ ມີວາສນາ ເປັນຜູ້ຈະທໍາເສິກຊະນະທົ່ວທຸກທິດສານຸທິດພຣະອົງຄ໌ໄດ້ແຕ່ງເສນາອາມາດໄດ້ຮັບເອົາ ຂຸນຜີຟ້າ ແລະ ເຈົ້າຟ້າງຸ້ມ ມາຊຸບລ້ຽງໄວ້ໃນຣາຊສໍານັກ ນະຄອນວັດ-ນະຄອນທົມ, ເຫມືອນດັ່ງຣາຊໂອຣົດບຸນທັມ (ລູກລ້ຽງ) ແລະໄດ້ສຶດສອນ ວິຊາການຕ່າງໆ ຕລອດເຖິງຕໍາ ນານພິໄຊສົງຄວາມ ເພັງຫອກ ເພັງດາບ ແລະ ຄາຖາອາຄົມວິຊາທະຫານ ເມື່ອເຖິງພະຊົນມາຍຸເປັນບ່າວ ພຣະອົງຄ໌ໄດ້ພຣະຣາຊທານ ຣາຊທິດາຂອງພຣະອົງຄ໌ ຄືພຣະນາງແກ້ວກັນຍາ ຫຼື ແກ້ວລອດຟ້າ ເປັນມິ່ງມະເຫສີ ຈາກນັ້ນໄດ້ພຣະຣາຊທານ ກອງທັບ 10.000 ຄົນ ພ້ອມດ້ວຍສາສຕຣາວຸທ ຊ້າງ ມ້າ ເພື່ອຂຶ້ນໄປກອບກູ້ເອົາບັນລັງ ລ້ານຊ້າງຮົ່ມຂາວ (ເມືອງຊວາ) ພ້ອມກັບ ຄະນະ ທັມມະທູດ ຄະນະນັກປາດ ແລະ ຄະນະນາຍຊ່າງ ຜູ້ຊ່ຽວຊານ ວິຊາການຕ່າງໆ ພ້ອມກັບພຣະບາງ ແຕ່ນັ້ນມາພວກເຮົາຈຶ່ງໄດ້ຂນານນາມພຣະບາງວ່າເປັນ ມິ່ງຂວັນຂອງລາວ .

ຄະນະ ໄດ້ເດີນທາງອອກຈາກ ນະຄອນວັດ-ນະຄອນທົມ ເມື່ອປີ ຄ.ສ. 1355 ຫຼື ພ.ສ. 1898 ໂດຍທາງບົກ ຜ່ານມາທາງດ່ານເຫນືອ ຄືເມືອງແກ (ຊຶ່ງເຮົາສັນນິຖານໄດ້ວ່າຄົງຈະເປັນ ເມືອງນາແກ ອໍາເພີນາແກ ຈັງຫວັດ ສະກົນນະຄອນ ໃນປັດຈຸບັນນີ້ ຈົນເຖິງແຄມຂອງ ທີ່ ເມືອງນະຄອນພນົມ ຈາກນັ້ນ ໄດ້ເດີນທາງຊົລະມາກ (ທາງນ້ຳ) ເພື່ອຈະຂຶ້ນໄປເມືອງຊຽງດົງ ຊຽງທອງ ຫຼື ເມືອງຊວາ ເມື່ອຂະບວນ ທັມມະທູຕ ແລະ ນາຍຊ່າງ ໄດ້ແຫ່ແຫນພຣະບາງ ຂຶ້ນໄປຕາມນ້ຳຂອງ ໄປເຖິງເມືອງ ວຽງຄໍາ (ວຽງຈັນ) ຂະບວນໄດ້ແວະເຊົາ ເອົາແຮງ ທີ່ ທາດດອນຈັນ ຫນ້າເມືອງວຽງຄໍາ ພ້ອມກັບເປີດໂອກາດໃຫ້ປະຊາຣາສະດອນລາວ .

ເມືອງວຽງຄໍາ ໄດ້ຖວາຍນະມັສສະການ ສັກກາຣະບູຊາ ພຣະບາງ ເປັນເວລາ ສາມມື້ ສາມຄືນ ເມື່ອເຖິງກໍາຫນົດ ແລ້ວ ຂະບວນແຫ່ ກໍ່ຈະອອກເດີນທາງຕໍ່ ຂຶ້ນໄປເມືອງຊວາ ຊຽງດົງຊຽງທອງ ຂະບວນວໍ່ ຫຼື ຄົນຫາມປາສາດພຣະບາງນັ້ນ ປົກກະຕິມີແປດຄົນ ຊຶ່ງຫາມໄປມາໄດ້ຢ່າງສະບາຍ ແຕ່ໃນມື້ນັ້ນ ເວລາຈະຫາມລົງເຮືອ ຄົນແປດຄົນທີ່ຫາມນັ້ນ ບໍ່ສາມາດທີ່ຈະຍົກວໍ່ພຣະບາງ ຂຶ້ນໄດ້ ຈຶ່ງຈໍາຕ້ອງເພີ້ມ ຈໍານວນເປັນ 16 ຄົນ ແຕ່ກໍ່ຍັງບໍ່ສາມາດຍົກຂຶ້ນໄດ້ອີກ ຈຶ່ງຈໍາຕ້ອງເພີ້ມອີກເປັນ 24 ຄົນ ແຕ່ກໍ່ຍັງບໍ່ສາມາດຍົກຂຶ້ນໄດ້ ອັນເປັນສິ່ງທີ່ມະຫັດສະຈັນເປັນຢ່າງຍິ່ງ ນັກປາດ ທັງສາມທ່ານ ຄື *ນໍຣະສິງ ນໍຣະເສັດ* ແລະ *ນໍຣະສາດ* ຈຶ່ງໄດ້ໃຫ້ຫມໍໂຫນ ຫມໍທວາຍ ຄູນເລກທໍານາຍເບິ່ງວ່າເປັນດ້ວຍເຫດສັນໃດ ຈຶ່ງໄດ້ຄວາມວ່າ *ພຣະບາງພຸທທະລາວັນ* ຢາກປະທັບຢູ່ວຽງຄໍາ ຕໍ່ໄປອີກຊົ່ວຣະຍະຫນຶ່ງອີກຕື່ມ ເພາະ ປະຊາຣາສະດອນ ຜູ້ຢູ່ໄກບໍ່ສາມາດມານະມັດສະການໄດ້ໃຫ້ທົ່ວເຖິງ. ດັ່ງນັ້ນ ຄະນະທັມມະທູຕ ຈຶ່ງໄດ້ອະນຸໂລມຕົກລົງ ມອບພຣະບາງ ໃຫ້ພະຍາເພົ້າ ເຈົ້າຄອງນະຄອນວຽງຄໍາ ເປັນຜູ້ຮັກສາ ເປັນເວລາ ສາມ ປີ ໃຫ້ປະຊາຣາສະດອນທີ່ມາຈາກທຸກທິດ ໄດ້ນະມັດສະການໃຫ້ທົ່ວເຖິງ ຈາກນັ້ນ ຄະນະທັມມະທູຕ ຈຶ່ງໄດ້ເດີນທາງຕໍ່ ໄປທາງບົກຂຶ້ນໄປເມືອງຊວາ ຊຽງດົງຊຽງທອງ ເມື່ອເຖິງເມືອງຊວາ ແລ້ວ ພຣະມະຫາປັດສະມັນ ກໍ່ໄດ້ກາບບັງຄົມທູນພຣະບາດສົມເດັດພຣະເຈົ້າ ຟ້າງຸ້ມ ເພື່ອຊົງຊາບເຫດການ ດັ່ງນັ້ນ ພຣະເຈົ້າຟ້າງຸ້ມ ແລະ ອັຄຣະມະເຫສີແກ້ວກັນຍາ ຫຼື ແກ້ວລອດຟ້າ ຈຶ່ງໄດ້ມີບັນຊາໃຫ້ເລັ່ງສ້າງວັດ ເພື່ອ ເປັນທີ່ປະດິດສະຖານ ສໍາຣັບ ພຣະບາງ ແລະໄດ້ໃສ່ຊື່ວັດນັ້ນວ່າ *(ວັດຍອດແກ້ວ)* ແລະບັນຊາໃຫ້ສ້າງວັດອີກວັດຫນຶ່ງຂຶ້ນອີກ ເພື່ອເປັນ ສໍານັກຂອງພຣະມະຫາກະສັດສະມັນ ວັດນີ້ໄດ້ສ້າງຂຶ້ນທີ່ ປາກຫ້ວຍໂຮບ ( ທິດໃຕ້ຫລວງພຣະບາງ 5 ກ.ມ. ຊຶ່ງເປັນວັດຫລັງແລກ ໃນອານາຈັກລ້ານຊ້າງ ປັດຈຸບັນນີ້ ສລັກຫັກພັງແລະ ຖືກນໍ້າເຖື່ອນເອົາ ໄປຫມົດແລ້ວ) ພ້ອມກັບໃຫ້ປູກຕົ້ນພຣະສີມະຫາໂພ ນະທີ່ວັດນັ້ນ ແລະ ພຣະຣາຊທານຊື່ວັດນັ້ນວ່າ ວັດປັດສະມັນ.

ເມື່ອຄົບ ສາມປີ ຄືໃນປີ ຄ.ສ. 1358 (ພ.ສ. 1901) ໄດ້ກະທໍາພິທີແຫ່ແຫນ ອັນເຊີນເອົາພຣະບາງຈາກເມືອງ ວຽງຄໍາ ຂຶ້ນໄປເມືອງຊວາ ຊຽງດົງຊຽງທອງ ແລະ ໄດ້ເອົາປະດິດສະຖານໄວ້ ທີ່ວັດຍອດແກ້ວ ອັນເປັນວັດຫລັງທີ ສອງ ສ້າງໂດຍນາຍຊ່າງ ຊາວຂເມນ ວັດຍອດແກ້ວນີ້ ແມ່ນຢູ່ທາງທິດເຫນືອຂອງວັດຫົວຊຽງ ໃນສໄມຝຣັ່ງເສດປົກຄອງ ຍັງເຫັນຊາກສລັກຫັກພັງຂອງວັດນີ້ຢູ່ ແຕ່ຕໍ່ມາຝຣັ່ງໄດ້ມ້າງສິ່ງສລັກຫັກພັງຂອງວັດຍອດແກ້ວນັ້ນອອກແລ້ວ ປຸກສ້າງເຮືອນພັກ ທີ່ເອີ້ນວ່າ (ບັງກາໂລ) ໃສ່ແທນ ແລະ ຕໍ່ມາ ໃນປີ ຄ.ສ. 1962 ໄດ້ສ້າງ ໂຮງແຮມຫລັງໃຫ່ຍໃສ່ແທນ ບັງກາໂລ ນັ້ນ ທີ່ເຮົາເອີ້ນວ່າ ໂຮງແຮມ ພູສີອາຄານ ຈົນເຖິງເທົ້າທຸກວັນນີ້.

ໃນປີ ຄ.ສ. 1479 (ພ.ສ. 2022) ໄດ້ເກີດສົງຄາມ ຣະຫວ່າງ ລາວ ແລະ ວຽດນາມ ຄືໃນ ຣັຊຊະສໄມຂອງ ພຣະບາດສົມເດັດພຣະເຈົ້າ ໄຊຍ໌ຈັກກະພັດແຜ່ນແຜ້ວ (2) ຜູ້ເປັນໂອຣົດ ຜູ້ຫລ້າສຸດ ຂອງພຣະເຈົ້າສາມແສນໄທຍ ປະສູດ ຄ.ສ. 1415 (ພ.ສ. 1958) ຄອງຣາຊສົມບັດ ຄ.ສ. 1442 (ພ.ສ. 1985) ເຖິງ ຄ.ສ. 1480 (ພ.ສ. 2023) ກັບ ຈັກກະພັດ ວຽດນາມ ພຣະເຈົ້າ ເລ-ທັນ-ຕົງ ພຣະບາງໄດ້ຖືກອັນເຊີນລົງມາໄວ້ວຽງຄໍາ ຫລັງຈາກທີ່ກອງທັບລາວໄດ້ຖອຍອອກຈາກ ເມືອງຊວາຊຽງດົງຊຽງທອງ ເພື່ອມາຕັ້ງຮັບທັບແກວ ທີ່ເມືອງ ຊຽງຄານ ພຣະເຈົ້າໄຊຍ໌ຈັກກະພັດແຜ່ນແຜ້ວ ໄດ້ເຖິງສວັນນະຄົຕ ທີ່ເມືອງຊຽງຄານ ດ້ວຍໂຣກຊະຣາ ໃນປີ ຄ.ສ. 1480 (ພ.ສ. 2023) ຊຶ່ງໃນເວລານັ້ນ ກໍາລັງມີເສີກກັບ ວຽດນາມຢູ່ ໂອຣົດອົງຄ໌ທີສອງ ຂອງພຣະອົງຄ໌ ຄື ເຈົ້າ ແທ່ນຄໍາ ໄດ້ນໍາກອງທັບລາວ ຕໍ່ສູ້ແກວ ຢ່າງພິລາດອາດຫານແລະໄດ້ໄຊຊະນະແກວ ທີ່ ປາກນໍ້າພູນ ແລ້ວໄດ້ໄລ່ຕີຂ້າຟັນກອງທັບແກວ ຈົນບໍ່ເຫຼືອຫລໍ ອອກຈາກ ແຜ່ນດິນ

ລ້ານຊ້າງ ເຈົ້າ ແທນຄຳ ຈຶ່ງໄດ້ ຂຶ້ນຄອງຣາຊ ແທນພຣະຣາຊບິດາ ໂດຍມີພຣະນາມວ່າ ພຣະເຈົ້າ ສຸວັນນະບັນລັງ ຄອງຣາຊໄດ້ 6 ປີ ກໍ່ສວັນນະຄົດ ໃນປີ ຄ.ສ. 1487 (ພ.ສ. 2030) ພຣະອະນຸຊາ (ນ້ອງຊາຍ) ຂອງພຣະເຈົ້າ ສຸວັນນະບັນລັງ ຊຶ່ງໃນເວລານັ້ນ ເປັນເຈົ້າຄອງນະຄອນ ວຽງຄຳ ຂຶ້ນຄອງຣາຊ ແທນພຣະເຈົ້າ ສຸວັນນະບັນລັງ ແລະ ໄດ້ຊື່ວ່າພຣະນາມວ່າ ພຣະເຈົ້າຫລ້າແສນໄທຍ ເປັນພຣະເຈົ້າແຜ່ນດິນລ້ານຊ້າງຮົ່ມຂາວ ກ່ອນຈະສເດັດ ອອກຈາກເມືອງ ວຽງຄຳ ຂຶ້ນໄປເມືອງຊວາ ຊຽງດົງຊຽງທອງ ໄດ້ອັນເຊີນເອົາ ພຣະບາງ ຂຶ້ນໄປພ້ອມ ໄປປະດິດສະຖານໄວ້ທີ່ວັດ ຊຽງກາງ ເພາະວ່າ ວັດຍອດແກ້ວ ໄດ້ຖືກ ທຳລາຍ ຕອນເສິກກັບແກວ ແລະ ໄດ້ຊື່ວ່າປະກາດປຽ່ນຊື່ເມືອງຊວາ ຊຽງດົງຊຽງທອງ ເປັນ ນະຄອນຫລວງພຣະບາງ ມະຫາຣາຊທານີ ສີສັຕຕະນາຄະນະຫຸດ ນັບແຕ່ນັ້ນມາຈຶ່ງມີ ນະຄອນຫລວງພຣະບາງ ຈົນເຖິງທຸກວັນນີ້.

(2) ໃນຣັຊຊະສະໄໝ ຂອງພຣະເຈົ້າ ໄຊຍ໌ຈັກກະພັດແຜ່ນແຜ້ວ ປະຊາຣາສະດອນລາວ ໄດ້ຖວາຍພຣະນາມວ່າ ພຣະເຈົ້າຊ້າງເຜືອກ ເພາະໄດ້ມີຊ້າງເຜືອກຄູ່ບາຣະມີເຖິງ 7 ເຊືອກ (ຕົວ) ສຳຣັບຊ້າງເຊືອກທີ່ງາມທີ່ສຸດ ຖືກຕ້ອງຕາມລັກສະນະຄົຊສານ ແມ່ນຊ້າງເຜືອກ ສູງ 7 ສອກ ທີ່ນັກຄ້ອງຊ້າງເມືອງແກ່ນທ້າວ ແຂວງໄຊຍະບຸຣີ ຄ້ອງມາໄດ້ ເມື່ອເຫັນລັກສະນະອັນເປັນມົງຄົນ ແລະ ມະຫັດສະຈັນ ເປັນຢ່າງຍິ່ງ ຈຶ່ງໄດ້ນຳຊ້າງເຜືອກນັ້ນໄປມອບໃຫ້ເຈົ້າເມືອງ ສີພຣະຍາປະຕິຣະບຸຕ ເຈົ້າເມືອງແກ່ນທ້າວ ພຣະຍາຕິຣະບຸຕໄດ້ນຳຊ້າງເຜືອກເຊືອກນັ້ນ ຂຶ້ນໄປທູນຖວາຍແດ່ ພຣະເຈົ້າໄຊຍ໌ຈັກກະພັດແຜ່ນແຜ້ວ ປາກົດວ່າ ມີຂ່າວລືໄປທຸກທິດສານທິດ ໃນຄວາມງົດງາມ ຂອງຊ້າງເຜືອກເຊືອກນັ້ນ ແລະຄວາມໄປຊອດເຖິງພຣະກັນ ຂອງ ພຣະເຈົ້າຈັກກະພັດ ເລ - ທັນ - ຕົງ ແຫ່ງວຽດນາມ ພຣະເຈົ້າ ເລ - ທັນ - ຕົງ ຈຶ່ງໄດ້ແຕ່ງຣາຊທູດ ມາຂໍເອົາຊ້າງເຜືອກ ດັ່ງກ່າວ ແຕ່ຫາກບໍ່ໄດ້ ກໍ່ຂໍເອົາຂົນຊ້າງນັ້ນແທນ ຕາມຮີດຄອງລາວແລ້ວ ຫາກຂໍຂົນຫຼືໜັງຊ້າງນັ້ນ ກໍ່ແປວ່າເປັນການຂ້າຊ້າງເຊືອກນັ້ນ ຊຶ່ງລາວເຮົາຖືວ່າ ເປັນການສົບປະມາດ ຢ່າງໃຫ່ຍຫລວງ ພຣະເຈົ້າໄຊຍ໌ຈັກກະພັດແຜ່ນແຜ້ວພ້ອມດ້ວຍເສນາອາມາດຈຶ່ງໄດ້ປຶກສາຫາລືກັນວ່າ ເພື່ອເປັນການແກ້ແຄ້ນການດູຖູກຂອງ ພຣະເຈົ້າ ເລ - ທັນ - ຕົງ ຈຶ່ງໄດ້ເອົາຂີ້ຊ້າງເຜືອກນັ້ນ ໃສ່ກັບຄຳ ມອບໃຫ້ຣາຊທູຕວຽດນາມ ນຳໄປຖວາຍ ພຣະເຈົ້າ ເລ - ທັນ - ຕົງ ຊຶ່ງເຮັດໃຫ້ ພຣະເຈົ້າ ເລ - ທັນ - ຕົງ ກໍ່ໂກດຢ່າງມາກ ຈຶ່ງໄດ້ກີທາທັບມາຕີ ອານາຈັກລ້ານຊ້າງແລະເປັນສາເຫດການກໍ່ເສິກຣະຫວ່າງ ວຽດນາມແລະລາວ ໃນປີ ຄ.ສ.1479(ພ.ສ. 2022).

ໃນປີ ຄ.ສ. 1503 (ພ.ສ. 2046) ເມື່ອພຣະເຈົ້າ ຫລ້າແສນໄທຍ ໄດ້ສວັນນະຄົຕລົງ ພຣະອະນຸຊາຂອງພຣະອົງຄ໌ (ໂອຣົດອົງຄ໌ທີ 8 ຂອງພຣະເຈົ້າ ໄຊຍ໌ຈັກກະພັດແຜ່ນແຜ້ວ ໄດ້ຂຶ້ນຄອງຣາຊແທນ ຊື່ພຣະນາມວ່າ ພຣະເຈົ້າ ວິຊຸນນະຣາຊ ໃນຣັຊຊະສະໄໝຂອງ ພຣະເຈົ້າ ວິຊຸນນະຣາຊ ພຣະບາງໄດ້ຖືກອັນເຊີນຈາກວັດຊຽງກາງ ໄປປະດິດສະຖານໄວ້ ທີ່ວັດ ມະໂນຣົມ ຊຶ່ງເປັນວັດໃຫ່ຍ ແລະເປັນວັດທີ່ໄດ້ສ້າງຂຶ້ນບົນພຣະເມນ (ບ່ອນເຜົາພຣະສົບ) ຂອງພຣະເຈົ້າ ສາມແສນໄທຍ ວັດມະໂນຣົມ ນີ້ ສ້າງໂດຍ ພຣະເຈົ້າຄຳແດງ ປະສູຕ ຄ.ສ. 1373 (ພ.ສ. 1916) ສເວີຍຣາຊ ຄ.ສ. 1416-1427 (ພ.ສ. 1959-1970).

ພຣະບາງ ໄດ້ປະດິດສະຖານຢູ່ວັດມະໂນຣົມ (3) ເປັນເວລາເກືອບສອງຮ້ອຍກວ່າປີ ຄ.ສ. 1503-1707 (ພ.ສ. 2046-2250). ໃນປີ ຄ.ສ. 1707 (ພ.ສ. 2240) ພຣະຍານອງ ຜູ້ເປັນ ອະນຸຊາ (ນ້ອງຊາຍ) ຂອງພຣະເຈົ້າໄຊອົງຄ໌ເວ້ ໄດ້ອັນເຊີນລົງມາປະດິດສະຖານ ໄວ້ທີ່ ນະຄອນວຽງຈັນ .

# *ພຣະບາງ ໄດ້ມາປະດິດສະຖານ*
# *ໄວ້ທີ່*
# *ນະຄອນວຽງຈັນ*

ໃນປີ ຄ.ສ. 1700 (ພ.ສ. 2243) ພຣະເຈົ້າ ໄຊຍ໌ອົງເວ້ ໂອຣົດຂອງ ເຈົ້າ ອິນພູ ຜູ້ເປັນ ອະນຸຊາ (ນ້ອງຊາຍ) ຂອງພຣະເຈົ້າ ສຸຣິຍະວົງສາ ໄດ້ເຂົ້າຍຶດເອົາ ນະຄອນວຽງຈັນ ໂດຍໄດ້ກໍາລັງທະຫານມາຈາກວຽດນາມ ແລະ ໄດ້ຂຶ້ນຄອງຣາຊສົມບັດ ເປັນພຣະເຈົ້າລ້ານຊ້າງຮົ່ມຂາວ ສ່ວນ ພຣະຍານອງ ຜູ້ ເປັນ ອະນຸຊາ (ນ້ອງຊາຍ) ໄດ້ຂຶ້ນໄປຕີ ຍຶດເອົາ ນະຄອນຫລວງພະບາງ ຊຶ່ງໃນເວລານັ້ນ ແມ່ນພຣະເຈົ້າ ກິ່ງກິດສະຣາຊ ແລະ ອິນທະໂສມ ຊຶ່ງເປັນ ນັດດາ (ຫລານຊາຍ) ຂອງພຣະເຈົ້າ ສຸຣິຍະວົງສາ ຄອງຢູ່ ພຣະເຈົ້າ ກິ່ງກິດສະຣາຊ ແລະ ອິນທະໂສມ ສູ້ບໍ່ໄດ້ ໄດ້ຖອຍທັບ ຂຶ້ນໄປທາງເຫນືອ ຄືໄປຍັງແຄ້ວນ ສິບສອງພັນນາລື້ ຊຶ່ງເປັນອານາຈັກລາວຝ່າຍເຫນືອ ແລະເປັນແຄ້ວນ ຂອງພຣະມານດາ ຂອງພຣະເຈົ້າກິ່ງກິດສະຣາຊ ແລະ ອິນທະໂສມ (4) ພຣະຍານອງ ໄດ້ເຂົ້າຍຶດຄອງ ນະຄອນຫລວງພຣະບາງ ແລະໄດ້ຄອງນະຄອນຫລວງພຣະບາງ ເປັນເວລາ 7 ປີ ຄືເຖິງ ຄ.ສ. 1707 (ພ.ສ. 2250) ໄດ້ຖືກພຣະເຈົ້າກິ່ງກິດສະຣາຊ ແລະ ອິນທະໂສມ ໂດຍໄດ້ກໍາລັງຈາກລາວຝ່າຍເຫນືອ ເຂົ້າຕີຍຶດເອົາ ນະຄອນຫລວງພຣະບາງຄືນ ພຣະຍານອງ ສູ້ທັບພຣະເຈົ້າ ກິ່ງກິດສະຣາຊ ບໍ່ໄດ້ ຈຶ່ງຖອຍທັບຄືນວຽງຈັນ ພ້ອມກັບອັນເຊີນເອົາພຣະບາງລົງມານໍາ .

(3) *ວັດມະໂນຣົມ* ໃນປັດຈຸບັນນີ້ ໄດ້ຖືກປະຕິສັງຂອນຂຶ້ນໃຫມ່ ເປັນວັດຊຶ່ງຢູ່ໃກ້ໆ ກັບວັດຊຽງກາງ ໃນສໄມເສິກຫໍ່ທຸງດໍາ ພຣະພຸທທະຮູບອົງຄ໌ຫລວງຂອງ *ວັດມະໂນຣົມ* ໄດ້ຖືກພວກຫໍ່ທຸງດໍາ ຕັດເອົາແຂນທັງສອງຂ້າງ ເພື່ອເອົາໄປຫລໍ່ຫລອມເຮັດກະສຸນປືນໃຫຍ່ .

(4) ໃນສໄມນັ້ນ ອານາຈັກລ້ານຊ້າງກວມເຖິງແຄ້ວນສິບສອງພັນນາ ພຣະນາງເຈົ້າ ຈັນທະກຸມາຣີ ຣາຊທິດາ ຂອງເຈົ້າຄອງແຄ້ວນສິບສອງພັນນາ ໄດ້ເປັນຣາຊເທວີ ຂອງເຈົ້າຣາຊບຸຕ (ໂອຣົດອົງຄ໌ດຽວຂອງພຣະເຈົ້າສຸຣິຍະວົງສາ ຊຶ່ງເປັນພຣະຣາຊມານດາຂອງ ພຣະເຈົ້າກິ່ງກິດສະຣາຊ ແລະ ອິນທະໂສມ) ບໍ່ໄດ້ຂຶ້ນຄອງຣາຊ ເພາະຖືກລົງໂທດປະຫານຊີວິດ ເນື່ອງດ້ວຍໄດ້ກະທໍາຊູ້ສາວກັບສນົມຂອງພຣະບິດາ.
ພຣະເຈົ້າໄຊຍ໌ອົງຄ໌ເວ້ ເຈົ້າຄອງນະຄອນວຽງຈັນ ແມ່ນໂອຣົດ ຂອງເຈົ້າອິນພູ ຜູ້ເປັນອະນຸຊາ (ນ້ອງ) ຂອງພຣະເຈົ້າ ສຸຣິຍະວົງສາ ເປັນລູກອ້າຍລູກນ້ອງ ກັບເຈົ້າຣາຊບຸຕ ບິດາຂອງພຣະເຈົ້າ ກິ່ງກິດສະຣາຊ.

## ພະບາງໄດ້ຖືກໄທ ນຳເອົາລົງໄປ ກຸງທົນບຸຣີ ໃນປີ ຄ.ສ. 1778 (ພ.ສ. 2321) ໂດຍພະຍາມະຫາກະສັດສຶກ ຕອນຫລັງໄດ້ເປັນພະພຸທະຍອດຟ້າຈຸລາໂລກ ຣ.1. ພະຣາມາທິບໍດີທີ່ 1 ອົງຄ່ເປັນຕົ້ນຣາຊວົງສ໌ຈັກກຣີ ຈົນເຖິງປັດຈຸບັນນີ້.

ພະເຈົ້າ ໄຊຍ໌ອົງເວ້ ໄດ້ຊົງຮັບຕ້ອນເອົາພະບາງ ຊຶ່ງພະຍານອງ ອັນເຊີນມາແຕ່ນະຄອນ ຫລວງພະບາງ ມາປະດິດສະຖານໄວ້ທີ່ ນະຄອນວຽງຈັນ ໃນຕຳນານບໍ່ໄດ້ບອກໄວ້ວ່າແມ່ນວັດໃດ ແຕ່ລົງສັນນິຖານໄດ້ວ່າ ຄົງແມ່ນ ວັດພະແກ້ວມໍຣະກົດ ຊຶ່ງແມ່ນພະເຈົ້າ ໄຊຍ໌ເສດຖາທິຣາຊ ໄດ້ອັນເຊີນເອົາມາແຕ່ ເມືອງຊຽງໃຫມ່ ເມື່ອ ຄ.ສ. 1548 (ພ.ສ. 2091).

ໃນປີ ຄ.ສ. 1778 (ພ.ສ. 2321) ພະບາງ ອົງຄ່ເປັນມິ່ງຂວັນ ຂອງຊາວລາວ ໄດ້ຖືກ ພະຍາມະຫາກະສັດສຶກ ນຳລົງໄປກຸງເທບ ພ້ອມກັບ ພະແກ້ວມໍຣະກົດ ຫລັງຈາກທີ່ໄດ້ຊະນະເສິກ ວຽງຈັນ ໃນເວລານັ້ນແມ່ນ ພະເຈົ້າອົງຄ່ບຸນ ຫຼື ພະເຈົ້າ ສິຣິບຸນຍະສານ ຜູ້ ເປັນໂອຣົດຂອງ ພະເຈົ້າ ໄຊຍ໌ອົງເວ້ ເປັນ ຜູ້ ຄອງ ນະຄອນວຽງຈັນ ພະເຈົ້າສິຣິບຸນຍະສານ ໄດ້ຫນີໄປ ວຽດນາມ ພະຍາມະຫາກະສັດສຶກ ໄດ້ນຳເອົາ ເຈົ້ານັນທະແລະເຈົ້າອິນທຣະວົງສ໌ ໂອຣົດຂອງພະເຈົ້າສິຣິບຸນຍະສານ ລົງໄປກຸງທົນບຸຣີນຳເພື່ອເປັນປະກັນ.

## ພະບາງໄດ້ກັບຄືນມາປະດິດສະຖານ ໃນ ຣາຊອານາຈັກລາວອີກ ທີ່ ວຽງຈັນ

ໃນປີ ຄ.ສ. 1782 (ພ.ສ. 2325) ພະຍາມະຫາກະສັດສຶກ ຊຶ່ງໄດ້ປຣາບດາພິເສັກຂຶ້ນເປັນກະສັດ ຣາຊ ອານາຈັກໄທຍ ເປັນພະຣາມາທິບໍດີທີ່ 1 (ພະພຸທທະຍອດຟ້າຈຸລາໂລກ) ໄດ້ຍ້າຍ ນະຄອນຫລວງ ຈາກ ກຸງທົນບຸຣີ ມາຕັ້ງທີ່ເມືອງບາງຫມາກກອກ ຫຼື ບາງກອກ ແລະຕັ້ງຊື່ໃຫມ່ວ່າ: *ກຸງເທພມະຫານະຄອນ ອາມອນຣັຕນະໂກສິນ* ແລະໄດ້ແຕ່ງຕັ້ງໃຫ້ ເຈົ້ານັນທະ ຂຶ້ນໄປຄອງ ນະຄອນວຽງຈັນ ແທນພະຣາຊບິດາ ແລະໄດ້ພະນາມວ່າ ພະເຈົ້າ ນັນທະເສັນ ແລະໄດ້ຂຶ້ນເປັນ ປະເທດສະຣາຊກັບໄທຍ ພະເຈົ້າຣາມາທິບໍດີ ທີ1 ໄດ້ພະຣາຊທານ ພະບາງ ແກ່ພະເຈົ້ານັນທະເສັນ ເພື່ອນຳມາປະດິດສະຖານໄວ້ທີ່ ວັດພະແກ້ວ ວຽງຈັນ ພະເຈົ້າ ນັນທະເສັນຄອງຣາຊຢູ່ເປັນ ເວລາ 10 ປີ ກໍ່ເຖິງສວັນນະຄົຕ ໃນປີ ຄ.ສ. 1792 (ພ.ສ. 2335).

## ພະບາງ ໄດ້ຖືກໄທຍຍຶດເອົາຄືນ ແລະ ນຳລົງໄປກຸງເທພ ໂດຍ ພະຍາບໍດິນ ໃນປີ ຄ.ສ. 1828 (ພ.ສ. 2371)

ຫລັງຈາກທີ່ ພະເຈົ້າ ອານຸວົງສ໌ ຜູ້ ຄອງ ນະຄອນວຽງຈັນ ຊຶ່ງໃນເວລານັ້ນ ຂຶ້ນກັບໄທຍ ໄດ້ຄິດກໍ່ກະບົດຂຶ້ນ ເພື່ອກອບກູ້ ເອົາເອກກະຣາຊລາວ ຈາກໄທຍ ແຕ່ບໍ່ສຳເຣັດ ພະຍາບໍດິນ ແມ່ທັບໄທຍ ໄດ້ຕີຊະນະເສິກວຽງ ຈັນ ແລະ ພະນັ່ງເກົ້າເຈົ້າຢູ່ຫົວ ຣັຊຊະການທີ່ 3 ໄດ້ຊົງສັ່ງໃຫ້ມ້າງເພເຜົາຜານເມືອງວຽງຈັນ ພ້ອມກັບ ກວາດ ຕ້ອນຄົນລາວລົງໄປ ກຸງເທພ ພ້ອມກັບໄດ້ອັນເຊີນ ເອົາພະບາງລົງໄປນຳ ເພື່ອໄປປະດິດສະຖານໄວ້ ທີ່ ກຸງເທພພະມະຫານະຄອນ.

## ພຣະບາງຄືນມາປະດິດສະຖານໃນ ຣາຊອານາຈັກລາວ ຈາກ ກຸງເທພມະຫານະຄອນ ຄັ້ງ ທີ ສອງ ໃນປີ ຄ.ສ. 1867 (ພ.ສ. 2410)

ພາຍຫລັງໄດ້ນຳພຣະບາງລົງມາ ປະດິດສະຖານໄວ້ທີ່ ກຸງເທພ ພຣະມະຫານະຄອນ ເປັນເວລາ 39 ປີ ຈົນເຖິງ ຣັຊຊະສໄມຂອງ ພຣະບາດສົມເດັດພຣະຈອມເກົ້າເຈົ້າຢູ່ຫົວ (ຣັຊຊະການທີ 4) ພຣະອົງຄ໌ໄດ້ພຣະຣາຊທານພຣະບາງ ໃຫ້ແກ່ພຣະເຈົ້າ ຈັນທະກຸມມານ ໂອຣົດຂອງ ພຣະເຈົ້າ ມັນທາທຸຣາຊ ໃນປີ ຄ.ສ. 1867 (ພ.ສ. 2410) ພຣະເຈົ້າ ຈັນທະກຸມມານ ເປັນອານຸຊາ (ນ້ອງ) ຂອງ ພຣະເຈົ້າ ສຸກກະເສີມ.

ຈຶ່ງເປັນອັນວ່າ ແມ່ນພຣະເຈົ້າ ຈັນທະກຸມມານ ເປັນຜູ້ໄດ້ນຳເອົາ ພຣະບາງ ຈາກ ປະເທດໄທຍ ມາປະດິດສະຖານ ໄວ້ທີ່ນະຄອນຫລວງພຣະບາງ ເພື່ອເປັນມິ່ງຂວັນ ຂອງ ປະເທດລາວລ້ານຊ້າງ ຈົນເຖິງທຸກວັນນີ້ ໂດຍທີ່ ພຣະບາດສົມເດັດພຣະເຈົ້າ ພຣະຈອມເກົ້າເຈົ້າຢູ່ຫົວ (ຣ.4.) ໄດ້ຊົງເຫັນວ່າ ພຣະບາງເປັນສົມບັດ ຂອງຊາວລາວ ທີ່ພຣະເຈົ້າກຸງກັມພູຊາ ໄດ້ມອບເປັນຂອງຂວັນ ແດ່ກະສັຕລາວ ຈຶ່ງຄວນຈະມອບຄືນໃຫ້ແກ່ ຜູ້ ສືບສາຍຣາຊຕຣະກຸນ ມາຈາກພຣະບາດສົມເດັດ ພຣະເຈົ້າຟ້າງຸ້ມມະຫາຣາຊ ຈຶ່ງຈະເປັນການຖືກຕ້ອງ. ຜູ້ທີ່ໄດ້ໄປອັນເຊີນເອົາພຣະບາງ ມາແຕ່ ກຸງເທພ ແມ່ນ ສົມເດັດເຈົ້າມະຫາອຸປະຣາຊ ອຸ່ນຄຳ ເປັນຜູ້ນຳຂະບວນ ຊ້າງ ມ້າ ໄປແຫ່ແຫນຄືນມາ ນະຄອນຫລວງພຣະບາງ ເມື່ອຂະບວນມາເຖິງ ເມືອງຊຽງແມນ ຕົງຂ້າມກັບນະຄອນຫລວງພຣະບາງ ໄດ້ເຊີນເອົາມາປະດິດສະຖານຊົ່ວຄາວ ເປັນເວລາ 7 ມື້ 7 ຄືນ ທີ່ວັດ ທ່າຄົກເຮືອ ເພື່ອໃຫ້ປະຊາຣາສະດອນໄດ້ໄປນະມັສສະການ ແລະເພື່ອລໍຖ້າ ຕຽມການຈັດງານປ່າງມະໂຫລານ ເພື່ອແຫ່ແຫນອັນເຊີນເຂົ້າ ພຣະນະຄອນຫລວງພຣະບາງ ເມື່ອແຫ່ມາປະດິດສະຖານ ໄວ້ທີ່ວັດ *ວິຊຸນນະຣາຊ* ແລ້ວ ໄດ້ຈັດງານສົມໂພດ ເປັນເວລາ 7 ມື້ 7 ຄືນອີກ. ພຣະບາງໄດ້ປະດິດສະຖານໄວ້ວັດວິຊຸນນະຣາຊນັ້ນ ແມ່ນເພື່ອການລໍຖ້າການສ້າງສາ *ຫໍພຣະບາງ* ຊຶ່ງກຳລັງໄດ້ເຣີ່ມກໍ່ສ້າງ ເພື່ອຈະໄດ້ເປັນສະຖານທີ່ອັນຖາວອນ ຂອງການປະດິດສະຖານຂອງພຣະບາງ ແຕ່ການກໍ່ສ້າງໄດ້ເກີດມີອຸບປະສັກ ໂດຍໄດ້ເກີດມີໄຟໄຫມ້ ຫໍພຣະບາງ ທີ່ກຳລັງກໍ່ສ້າງເກືອບຈະເສັດຢູ່ແລ້ວນັ້ນ ປ່າງຣາບຄາບ. ຈາກນັ້ນ ເນື່ອງຈາກພຣະວິຫານວັດວິຊຸນນະຣາຊເກົ່າແກ່ຊຸດໂຊມ ກົວຢ້ານຈະພັງທະລາຍ ຈຶ່ງໄດ້ອັນເຊີນມາປະດິດສະຖານໄວ້ທີ່ອາຣາມວັດໃຫ່ມສຸວັນນະພູມາຣາມ (ວັດໃຫ່ມສຸວັນນະພູມາຣາມນີ້ ສ້າງໂດຍພຣະເຈົ້າ ອານຸຣຸດ ຜູ້ ເປັນພຣະເສດຖາ (ອ້າຍ) ຂອງ ພຣະເຈົ້າ ສຸຣິຍະວົງສາ ໃນປີ ຄ.ສ. 1800 (ພ.ສ. 2343).

## ພຣະບາງ ໄດ້ປະດິດສະຖານຢູ່ໃນອາຣາມ ວັດໃຫ່ມສຸວັນນະພູມາຣາມ ແຕ່ປີ ຄ.ສ. 1889-1941 (ພ.ສ. 2432-2484) ແລ້ວຈາກນັ້ນ ໄດ້ອັນເຊີນເອົາໄປປະດິດສະຖານໄວ້ ໃນພຣະບໍຣົມມະຫາຣາຊວັງຫລວງ ແຕ່ປີ 1941-1979

ພຣະບາງ ໄດ້ປະດິດສະຖານຢູ່ໃນອາຣາມ ວັດໃຫ່ມສຸວັນນະພູມາຣາມ ຕັ້ງແຕ່ເດືອນ ພຶສພາ ຄ.ສ. 1889 (ພ.ສ. 2432) ຈົນເຖິງ ຄ.ສ. 1951 (ພ.ສ. 2484) ຈຶ່ງໄດ້ອັນເຊີນເຂົ້າໄປປະດິດສະຖານໄວ້ໃນ ພຣະບໍຣົມມະຫາຣາຊວັງຫລວງ ທັ້ງນີ້ເພື່ອຄວາມປອດໄພ ເພາະໃນຣະຍະນັ້ນ ແມ່ນຣະຍະສົງຄາມ ຣະຫວ່າງ ຝຣັ່ງເສສ ກັບ ໄທຍ .

**ໃນ**ເວລາທີ່ ພຣະບາງ ປະດິດສະຖານຢູ່ໃນອາຣາມ ວັດໃຫມ່ສຸວັນນະພູມມາຣາມ ທາງຣາຊການໄດ້ຈັດຄົນເຝົ້າຍາມ ສຳຣັບຄວາມປອດໄພ ເປັນປະຈຳ ທີ່ພວກເຮົາເອີ້ນກັນວ່າ (ໄທຝຣັ່ນ) ທາງຣາຊການໄດ້ຕົກໃສ່ຊາຍສະກັນທັ້ງຫມົດ ຂອງບ້ານຫວ້ຍຮີ່ງ ຊຶ່ງເປັນບ້ານນ້ອຍໆ ບ້ານຫນຶ່ງ ຢູ່ແຄມນ້ຳຄານ ທາງທິດຕະວັນອອກ ຂອງ ເມືອງຫລວງພຣະບາງ ເມື່ອໄດ້ເປັນ (ໄທຝຣັ່ນ) ແລ້ວ ທາງຣາຊການໄດ້ຍົກເວັ້ນການ (ເສັຽສ່ວຍ) ຍົກເວັ້ນການ (ເກັນ) ຫຼື (ຄຣັ່ນ) ເພື່ອຮັບໃຊ້ ຣາຊການປົກຄອງ ໃນການລຳລຽງ.

**ໃນ**ສໄມກ່ອນ ຕອນທີ່ ພຣະບາງ ຍັງປະດິດສະຖານຢູ່ວັດໃຫມ່ ທຸກໆປີ ໃນໂອກາດປີໃຫມ່ ພິທີຮັບນ້ຳພິພັດສັຕຕະຍາ (ສາບານຕົວ) ໄດ້ກະທຳກັນໃນອາຣາມ ວັດໃຫມ່ ຕໍ່ຫນ້າ ພຣະບາງ. ນອກຈາກນັ້ນ ໃນພິທີສາບານຕົວຕ່າງໆ ເປັນຕົ້ນ ການສາບານຕົວຂອງ ຂຸນສານ ປະຈຳສານສຖິຕຍຸຕິທັມ ກໍ່ໄດ້ກະທຳກັນ ໃນອາຣາມນີ້ ເຊັ່ນດຽວກັນ ຊາວລາວຖືກັນວ່າ ສະຖານທີ່ນີ້ເປັນສະຖານທີ່ສັກສິດ ດ້ວຍຣິດເດດ ຂອງພຣະບາງ ຊຶ່ງເຊື່ອກັນວ່າສາມາດດົນບັນດານ ເຫດການຕ່າງໆ ຢ່າງທັນຕາເຫັນ ຜູ້ໃດມີຄວາມຊື່ສັຕ ກະຕັນຍູກະຕະເວທີ ຕໍ່ຊາຕຕໍ່ກົດຫມາຍບ້ານເມືອງ ຕໍ່ພຣະມະຫາກະສັຕ ຈະໄດ້ຮັບແຕ່ຄວາມຢູ່ດີກິນດີ ຄວາມສຸກສວັດດີ ຈເຣີນກ້າວຫນ້າໃນຫນ້າທີ່ການ ຫາກຜູ້ໃດ ບໍ່ຊື່ສັດສຸດຈະຣິດ ຄິດຄົດທໍຣະຍົດຕໍ່ບ້ານ ຕໍ່ເມືອງ ຕໍ່ພຣະມະຫາກະສັຕ ຫຼືເປັນຜູ້ ຮ້າຍຊາຍໂຈນ ຄິດຄົດສໍ້ ໂກງ ກໍ່ຈະໄດ້ຮັບເຄາະກັມ ຄວາມຫາຍຍະນະ ຫຼື ເຈັບໄຂ້ໄດ້ປ່ວຍ ຈົນເຖິງຊີວິດ ຢ່າງທັນຕາເຫັນ ບາງລາຍ ກໍ່ກາຍເປັນຄົນເສັຽອົງຄະ ເປັນເປ້ັຍ ເປັນລ່ອຍ ແລະຕາຍທັນທີຫລັງຈາກສາບານ ອອກຈາກວັດໄປ. ຄວາມສັກສິດຂອງ ພຣະບາງ ອີກປະການຫນຶ່ງ ກໍ່ຄື ສາມາດເຮັດໃຫ້ພຍາດບາດເຍົາ ຫາຍໄດ້ທັນຕາເຫັນ ເປັນຕົ້ນວ່າເອົາຄຳປີວ ໄປປິດຕາມຕົວອົງຄ໌ພຣະບາງນັ້ນ ຕຣົງກັບບ່ອນທີ່ຕົນເຈັບຈະດົນບັນດານໃຫ້ຫາຍພຍາດນັ້ນໄດ້ທັນທີ. ການທີ່ປະຊາຊົນເອົາຄຳປີວໄປປິດຕາມຕົວ ພຣະບາງ ນັ້ນ ເຮັດໃຫ້ບໍຣິເວນທີ່ປິດນັ້ນ ນັບມື້ນັບບຸຫນາຂື້ນ ໂດຍສະເພາະແມ່ນບໍຣິເວນຫນ້າພຣະພັກ ຊຶ່ງທຳໃຫ້ຊອດຊົງ ພຣະບາງເສັຽໄປ ສນັ້ນ ນັບແຕ່ປີ 1935 (ພ.ສ. 2478) ເປັນຕົ້ນມາ ທາງຣາຊການຈຶ່ງໄດ້ຫ້າມ ບໍ່ໃຫ້ປະຊາຊົນເອົາຄຳປີວໄປປິດອີກ.

**ຕາມ**ຄວາມເລົ່າລືມາ ແຕ່ໂບຮານນະການ ພຣະບາງນີ້ ມີຣິດເດດ ໃນການສເດັດອອກຈາກ ວິຫານທີ່ພຣະບາງ ປະທັບຢູ່ ເພື່ອເຫາະເຫີນສເດັດໄປທາງອາກາດ ເພື່ອສເດັດໄປໃນທີ່ຕ່າງໆ ເປັນຕົ້ນ ໄປຊຽງໃຫມ່ ໄປວຽງຈັນ ຫຼື ໄປກຸງເທພ ເພື່ອໄປຢ້ຽມຢາມ ພຣະແກ້ວມໍຣະກົດ ໂດຍປະຊາຊົນຈະເຫັນເປັນກ້ອນໄຟສີຟ້າຂຽວຢ່າງງົດງາມ ເອີ່ນອອກຈາກ ອາຣາມທີ່ປະທັບຢູ່ໃນເວລາເດິກ ເຫາະໄປໃນທ້ອງຟ້າ ບາງຄັ້ງກໍ່ໄປທາງທິດພູຊວງ ບາງຄັ້ງກໍ່ໄປທາງທິດເຫນືອ ໄປທາງທິດປາກອູ ຫຼື ຖ້ຳຕິ່ງ ຫຼື ໄປຕາມພູເຂົາ ບ່ອນທີ່ມີສິ່ງສັກສິດ ປະຊາຊົນ ຈຶ່ງເຊື່ອວ່າ ພຣະບາງ ສເດັດໄປຢ້ຽມຢາມ ສິ່ງສັກສິດເລົ່ານັ້ນ ຫຼື ສເດັດໄປຈຳສິນນະສະຖານທີ່ເລົ່ານັ້ນ.

**ນອກ**ຈາກນີ້ ຍັງມີຄຳເລົ່າ ຄັ້ງຫນຶ່ງ (ໄທຝຣັ່ນ) ຜູ້ ເຝົ້າຍາມຮັກສາ ພຣະບາງ ໄດ້ລັກເອົາຊຸດ ຝຸ່ນທອງຄຳປີວທີ່ເຂົາເຈົ້າເອົາມາຝອກນັ້ນ ພໍຊຸດແລ້ວ ໄທຝຣັ່ນຜູ້ ນັ້ນໄດ້ຕາຍກາງທາງກ່ອນຈະເດີນທາງກັບໄປເຖິງບ້ານ ແບບຕາຍຫົວຫມູບທິ່ນ ຕີນຈຸ່ມນ້ຳ ຊຶ່ງຊາວລາວ ເຊື່ອຖືວ່າເປັນການຕາຍແບບຖືກສາບແຊ່ງ.

ໃນພຸທທະທຳນາຍ ກຽ່ວເຣື່ອງປະວັຕ ພຣະບາງ ໄດ້ກ່າວໄວ້ວ່າ ຫາກມີຜູ້ໃດພະຍາຍາມ ລັກພາຍາດຊິງເອົາ ພຣະບາງຫນີຈາກ ນະຄອນຫລວງພຣະບາງ ຫຼື ປັດຕະພີລ້ານຊ້າງ ເອົາໄປໄວ້ໃນສະຖານທີ່ຊື່ງ ພຣະບາງ ບໍ່ມັກແລ້ວ ຈະເກີດໄພພິບັຕ ແລະ ເຫຕການອັນເປັນອັບປະມົງຄົນ ແກ່ຜູ້ລັກພາໄປ ແລະ ແກ່ສະຖານທີ່ນັ້ນໆ ພວກເຮົາໄດ້ເຫັນເປັນປະຈັກຕາມາແລ້ວ ຄືດັ່ງນີ້ :

ກ. ໃນສໄມທີ່ ພຣະຍານອງ ລັກພາເອົາ ພຣະບາງ ຈາກນະຄອນຫລວງພຣະບາງ ລົງມາ ວຽງຈັນ ໄດ້ກໍ່ເກີດ ໄພພິບັຕ ແລະ ເຄາະເຂັນຄວາມບໍ່ສງົບ ດັ່ງນີ້ :

- ແຄ້ວນລາວພວນ ແຂວງຊຽງຂວາງ ໄດ້ແຂງເມືອງຕໍ່ ພຣະເຈົ້າໄຊຍ໌ອົງເວ້ ຈຶ່ງໄດ້ເກີດ ການຣົບຣາຂ້າຟັນກັນເອັງ ຣະວ່າງລາວຕໍ່ລາວ.
- ແຄ້ວນລາວພາກໃຕ້ ຄືນະຄອນຈຳປາສັກ ຄືພຣະເຈົ້າຊ້ອຍສີສມຸດ ກໍ່ແຂງເມືອງ ບໍ່ຍອມ ຂື້ນກັບ ພຣະເຈົ້າກຸງລ້ານຊ້າງ ຄືພຣະເຈົ້າໄຊຍ໌ອົງເວ້ ຊຶ່ງແຕ່ກ່ອນ ຂື້ນກັບ ວຽງຈັນ ແຕ່ຕອນນັ້ນ ໄດ້ຫັນໄປຂື້ນກັບໄທຍ ແລະ ກັມພູຊາ.

ແຕ່ນັ້ນມາ ອານາຈັກລ້ານຊ້າງຮົ່ມຂາວ ແຕ່ກ່ອນເປັນອານາຈັກໃຫ່ຍ ຕັ້ງແຕ່ ສິບສອງພັນນາ ຈົນເຖິງຈຳປາ ສັກ ແລະ ຕັ້ງແຕ່ແດນອະຍຸທທະຍາພູພະຍາໄຟ ຈົນເຖິງພູແດນແກວ ໄດ້ແຕກແຍກເປັນສາມອານາຈັກ ຄື :

* ອານາຈັກຫລວງພຣະບາງ ໂດຍມີ ພຣະເຈົ້າກິ່ງກິດສະຣາຊ ເປັນເຈົ້າຄອງນະຄອນ.
* ອານາຈັກວຽງຈັນ ໂດຍມີ ພຣະເຈົ້າ ໄຊຍ໌ອົງຄ໌ເວ້ ແລະ
* ອານາຈັກຈຳປາສັກ ໂດຍມີ ພຣະເຈົ້າຊ້ອຍສີສມຸດ.

ຂ. ໃນສໄມທີ່ໄທຍ ໄດ້ຍຶດເອົາ ພຣະບາງ ລົງໄປກຸງທົນບຸຣີ ທາງຝ່າຍໄທຍ ຊາບເຣື່ອງດີ ຈຶ່ງໄດ້ທຳພິທີບວງສວງ ແລະ ທຳພຸທທະພິທີຢ່າງໃຫ່ຍໂຕ ເພື່ອຈະແກ້ໄຂເຫຕການ ດັ່ງກ່າວ ແຕ່ກໍ່ບໍ່ສາມາດແກ້ໄຂໄດ້ ໄດ້ເກີດເຄາະເຂັນດັ່ງນີ້ :

- ໄດ້ເກີດອັກຄີໄພ (ໄຟໄຫ້ມ) ຢ່າງໃຫ່ຍຫລວງທີ່ສຸດ ໃນຕົວເມືອງກຸງທົນບຸຣີ.
- ໄດ້ເກີດເສິກໃຫ່ຍ ຣະຫວ່າງ ໄທຍກັບພະມ້າ ແລະ ໄທຍກັບກັມພູຊາ.
- ໄດ້ເກີດໂຣກອະຫິວາ (ໂຣຫ່າ) ເຮັດໃຫ້ປະຊາຊົນໃນກຸງທົນບຸຣີຕາຍເຖິງ 40.000 ຄົນ ຣ່ວມທັງ ອະນຸຊາ ຂອງ ພຣະເຈົ້າກຸງສຍາມອີກ.
- ອານາຈັກໄທຍ ໄດ້ເສັຍແຄ້ວນມອນ ແກ່ພະມ້າ.
- ພຣະເຈົ້າຕາກສິນ ແຫ່ງກຸງທົນບຸຣີ ຖືກໂຄ່ນລົ້ມ ແລ້ວພຣະຍາມະຫາກະສັຕສຶກ ໄດ້ປາບ ດາພິເສັກ ເປັນພຣະເຈົ້າກຸງສຍາມ ຊຶ່ງເປັນການເຣີ່ມຕົ້ນ ຂອງຣາຊວົງສ໌ຈັກກຣີ ຈົນເຖິງທຸກວັນນີ້.

ຄ. ໃນສໄມທີ່ໄທຍໄດ້ຍຶດເອົາໄປຄັ້ງທີ ສອງ ໃນຣັຊຊະສໄມຂອງ ສົມເດັດພຣະນັ່ງເກົ້າ ເຈົ້າຢູ່ຫົວ (ຣ.3.) ສໄມເຈົ້າອານຸວົງສ໌ ໄດ້ມີຫມໍໂຫນຫມໍທວາຍໄທຍ ຜູ້ເກັ່ງທີ່ສຸດ ໄດ້ໃຫ້ການທຳນາຍ ໄວ້ວ່າ ເຫຕການທີ່ເລົ່າລື ສຳຣັບຣິດເດດຂອງ ພຣະບາງນັ້ນ

ມີຄວາມຈິງ ຈຶ່ງໄດ້ນຳຄວາມຂຶ້ນກາບບັງຄົມທູນ ພະເຈົ້າກຸງສຍາມ ເຣື່ອງນີ້ ຈຶ່ງເປັນສາເຫດ ທີ່ໄທຍໄດ້ມອບ ພະບາງ ຄືນໃຫ້ແກ່ ລາວ ເປັນຄັ້ງທີສອງ ໂດຍແມ່ນ ເຈົ້າມະຫາອຸປະຣາຊ ອຸ່ນຄຳ ໄດ້ໄປອັນເຊີນເອົາມາແຕ່ກຸງເທພ ໃນຣັຊຊະສໄມ ຂອງພະເຈົ້າພະຈອມເກົ້າເຈົ້າຢູ່ຫົວ ເປັນພະເຈົ້າກຸງສຍາມ ແລະ ພະເຈົ້າຈັນທະກຸມມານ ເປັນພະເຈົ້າກຸງລ້ານຊ້າງຮົ່ມຂາວ ຫລວງພະບາງ.

(6) ໃນຣະວ່າງປີ 1930 ປາຍ ໃນໂອກາດບຸນສົງການປີໃຫມ່ ຂ້າພະເຈົ້າຈຳຈື່ໄດ້ດີວ່າ ພະບາງ ໄດ້ຖືກອັນເຊີນຈາກຫໍຫົນດົບ ທີ່ປະທັບໃນອາຣາມ ວັດໃຫມ່ ເພື່ອມາປະດິດສະຖານທີ່ ຜາມຫໍສົງ ໃນວັນສັງຂານໄປຄືວັນເອົາພະລົງ ເພື່ອໃຫ້ປະຊາຊົນໄດ້ມີໂອກາດໄດ້ນະມັສການ ແລະ ທຳການສັກກາຣະບູຊາ ຫົດສົງດ້ວຍນ້ຳດອກໄມ້ ນ້ຳອົບນ້ຳຫອມ ເປັນເວລາ 24 ຊົ່ວໂມງ ຕາມປົກກະຕິ ການຍົກອັນເຊີນລົງມານັ້ນ ແມ່ນບິດາ ແລະ ລຸງຂອງຂ້າພະເຈົ້າ ເປັນຜູ້ ກະທຳພິທີ ແລ້ວຍົກຍໍພະບາງ ລົງຈາກແທ່ນ ລົງມາສູ່ຜາມຫົດສົງ ຊຶ່ງໄດ້ຕົກແຕ່ງປະດັບປະດາ ດ້ວຍດອກໄມ້ ແລະ ມີຮາງລິນເປັນຮູບພະຍານາກ ຢ່າງສວຍງາມ, ບິດາແລະລຸງຂອງຂ້າພະເຈົ້າ ພຽງສອງຄົນ ກໍ່ສາມາດຍົກລົງມາໄດ້ຢ່າງສະບາຍ ຖ້າຫາກວ່າ ເຮົາກະທຳພິທີອັນເຊີນຢ່າງຖືກຕ້ອງຕາມຮີດຄອງ ແລະ ຫາກ ພະບາງເອງຊົງຍິນຍອມທີ່ຈະສເດັດລົງ.

ຫລັງຈາກທີ່ເພິ່ນໄດ້ເອົາ ພະບາງອົງຄ໌ແທ້ ໄປໄວ້ໃນພະຣາຊວັງແລ້ວ ພິທີກໍ່ໄດ້ຈັດເປັນຂະບວນແຫ່ໂດຍໄດ້ແຫ່ຈາກ ພະຣາຊວັງ ໄປຍັງຜາມສົງທີ່ວັດໃຫມ່ສຸວັນນະພູມມາຣາມ ແລະ ເມື່ອຈົບພິທີ 24 ຊົ່ວໂມງແລ້ວ ກໍ່ໄດ້ຈັດຂະບວນແຫ່ຄືນພະຣາຊວັງ. ກ່ອນຈະທຳການຊັ່ງນ້ຳຫນັກພະບາງນີ້ ກໍ່ເຊັ່ນດຽວກັນ ຕ້ອງໄດ້ກະທຳພິທີ ຂໍສົມມັດສົມມາຄາຣະວະເສັຍກ່ອນ ໃຫ້ຖືກຕາມຮີດຕາມຄອງ ຈຶ່ງຈະສາມາດຊັ່ງນ້ຳຫນັກໄດ້ໃນທຸກໂອກາດ ທີ່ມີການຈະອັນເຊີນໂຍກຍ້າຍສະຖານທີ່ ທຸກຄັ້ງກໍ່ຕ້ອງໄດ້ກະທຳພິທີເຊັ່ນດຽວກັນ.

ເຣື່ອງຄ້າຍຄື ກັນນີ້ ໄດ້ເກີດຂຶ້ນທີ່ ບ້ານເມືອງຫມໍ ຊຶ່ງຢູ່ແຄມນ້ຳເຫືອງ ໃກ້ໆ ກັບເມືອງແກ່ນທ້າວ ແຂວງໄຊຍະບູຣີ ຕິດກັບຊາຍແດນໄທຍ ຈັງຫວັດເລີຍ ທີ່ບ້ານ ເມືອງຫມໍ ມີພະພຸທທະຮູບສັກສິດອົງຄ໌ຫນຶ່ງ ທີ່ປະຊາຊົນໄດ້ເອີ້ນກັນວ່າ (ພະຄູນເມືອງ) ຫຼື (ພະມິ່ງເມືອງ) ຫຼື ບາງຄົນກໍ່ວ່າ (ພະສຽງ) ດ້ວຍເຫດວ່າ ພະພຸທທະຮູບອົງຄ໌ນີ້ ບາງຄັ້ງ ກໍ່ມີນ້ຳຫນັກ ຍົກຂຶ້ນໄດ້ຢ່າງສະບາຍ ບາງຄັ້ງກໍ່ຫນັກ ບໍ່ສາມາດຈະຍົກຂຶ້ນໄດ້ ພະອົງຄ໌ນີ້ເປັນພະທຳດ້ວຍໂລຫະທອງສັມຣິດ ແບບປາງນັ່ງສະມາທິ ມີຄວາມສູງປະມານ 45 ເຊັນຕີແມດ ແລະປະມານນ້ຳຫນັກໄດ້ວ່າ ປະມານສິບກວ່າ ກິໂລກັຣມ ໄດ້ມີຜູ້ ເຖົ້າ ຊາວບ້ານເມືອງຫມໍ ໄດ້ເລົ່າໃຫ້ຟັງ ໃນປີ ຄ.ສ. 1920 ປາຍ ໄດ້ມີຂ້າຣາຊການຝຼັ່ງເສດ ທີ່ມາເປັນຜູ້ ປົກຄອງ ເມືອງປາກລາຍ ທີ່ຊາວບ້ານເອີ້ນວ່າທ່ານ *ເດເລເກ* ມີຄວາມປະສົງຢາກໄດ້ ພະຄູນເມືອງ ໄປເປັນສົມບັດສ່ວນຕົວ ແລະ ຄິດວ່າຈະເອົາໄປເມືອງຝຼັ່ງນຳ. ຈຶ່ງໄດ້ສັ່ງໃຫ້ທະຫານ ໄປເອົາ ພະອົງຄ໌ນັ້ນ ແລ້ວຍັດໃສ່ກະສອບປ່ານ ບໍ່ໃຫ້ໃຜເຫັນ ແລ້ວສັ່ງໃຫ້ທະຫານ ຍົກໃສ່ບ່າແບກອອກຈາກວັດ ພໍໄກ້ຈະພົ້ນແດນວັດ ຮູ້ສຶກວ່າ ພະອົງຄ໌ນັ້ນ ມີນ້ຳຫນັກ ຫນັກຂຶ້ນທັນທີ ຈົນບໍ່ສາມາດຈະແບກໄດ້ ຈຳຕ້ອງໄດ້ວາງລົງ ເມື່ອເປັນເຊັ່ນນັ້ນ ທ່ານ *ເດເລເກ* ກໍ່ສັ່ງໃຫ້ທະຫານຫລາຍຄົນ ມາຊ່ວຍຍົກ ແຕ່ກໍ່ຍົກບໍ່ຂຶ້ນ ຕາມເຄີຍ ທ່ານ *ເດເລເກ* ຈຶ່ງໄປນຳເອົາ ຊ້າງ ມາດຶງ ແມ້ແຕ່ຊ້າງເອງກໍ່ບໍ່ສາມາດ ດຶງໃຫ້ກະສອບປ່ານທີ່ບັນຈຸ ພະຄູນເມືອງ ນັ້ນເຄື່ອນໄຫວໄດ້ ໃນທີ່ສຸດ ທ່ານ *ເດເລເກ* ຝຼັ່ງຜູ້ ນັ້ນຕ້ອງຍິນຍອມ ຂານສົ່ງພະຄູນເມືອງນັ້ນ ແກ່ຊາວເມືອງຫມໍ ເມື່ອກະທຳພິທີ ຄາຣະວະສົມມັດສົມມາຂານສົ່ງແລ້ວ ປາກົດວ່າ ທະຫານຜູ້ ດຽວ ຍົກພະອົງຄ໌ນັ້ນມາຄືນໄວ້ທີ່ເດີມ ຢ່າງສະບາຍ ເມື່ອທ່ານ *ເດເລເກ* ຜູ້ ນັ້ນກັບຄືນມາປາກລາຍ ປາກົດວ່າໄດ້ເກີດເຈັບປ່ວຍ ຢ່າງຫນັກ ຈົນໄດ້ເອົາລົງເຮືອເພື່ອມາປິ່ນປົວ ທີ່ວຽງຈັນຢ່າງກະທັນຫັນ ແຕ່ນັ້ນມາ ປາກົດວ່າ ບໍ່ເຫັນ ທ່ານ *ເດເລເກ* ຜູ້ ນັ້ນກັບຄືນໄປປາກລາຍອີກ ແລະບໍ່ຊາບຂ່າວການເປັນການຕາຍແຕ່ຢ່າງໃດ.

ຕໍ່ມາ ໃນປີ ຄ.ສ. 1940 ປາຍ ໄດ້ມີໂຈນນັກປຸ້ນໄທຍ ໄດ້ມາລັກ ພຣະລູນເມືອງອົງຄນັ້ນໄປ ແລະ ລັກເອົາໄປໄວ້ຈັງຫວັດເລີຍ ຍັງບໍ່ທັນຮອດ ສາມມື້ຊໍ້າ ໄດ້ເກີດ ອັກຄີໄພ (ໄຟໄໝ້) ບ້ານນັ້ນ ຈົນວອດວາຍໄປໝົດໝໍ່ໂຫນໝໍ່ທວາຍໄດ້ບອກວ່າເປັນເພາະມີຜູ້ນໍາພຣະ ອັນບໍ່ຊອບດ້ວຍສິນທັມ ນັ້ນມາ ຈົນຊາວບ້ານ ແລະນັກປຸ້ນນັ້ນຈໍາຕ້ອງນໍາເອົາ ພຣະລູນເມືອງນັ້ນ ຄືນໄປສົ່ງ ແກ່ຊາວບ້ານເມືອງໝໍ່ ເພາະຫາກເອົາຮັກສາໄວ້ຕໍ່ໄປ ຍິ່ງຈະເກີດ ອຸບປະຕິເຫດ ທຸກເຂັນແກ່ຊາວບ້ານນັ້ນອີກຕື່ມ.

**ເຣື້ອງນີ້** ຂ້າພະເຈົ້າ ໄດ້ມີໂອກາດ ໄດ້ໄປພິສູດດ້ວຍຕົນເອັງ ໃນປີ ຄ. ສ. 1969 ໃນເວລາທີ່ຂ້າພະເຈົ້າໄດ້ໄປກວດຣາຊການ ທາງດ້ານເສດຖະກິດ ທີ່ເມືອງແກ່ນທ້າວ ໃນຖານະເປັນ ຣັຖະມົນຕຼີ ວ່າການກະຊວງເສດຖະກິດ ຂ້າພະເຈົ້າ ໄດ້ມີໂອກາດ ໄປນະມັດສະການ ພຣະລູນເມືອງ ທີ່ ບ້ານເມືອງໝໍ່ ແລະມີໂອກາດໄດ້ສຽງທວາຍ ດ້ວຍຕົນເອັງ ຕາມຮີດຕາມຄອງ ຂອງຊາວບ້ານ ປາກົດວ່າ ການຍົກພຣະນັ້ນ ເບົາ ຍົກຂຶ້ນໄດ້ຫາກວ່າການສຽງນັ້ນ ຈະມີຫວັງເປັນຈິງ ແລະຈະຍົກບໍ່ຂຶ້ນ ຫາກຄວາມສຽງນັ້ນ ມີຫວັງຈະບໍ່ສໍາເຣັດ.

**ເຣື້ອງການ**ເປັນມາ ຂອງພຣະບາງ ຢ່າງຫຍໍ້ໆ ທີ່ຂ້າພະເຈົ້າໄດ້ພັນລະນາມານີ້ ແມ່ນຂໍມອບເປັນຄວາມກະຕັນຍູກະຕະເວທີ ຕໍ່ຜູ້ ເປັນລຸງຂອງຂ້າພະເຈົ້າ ຄື ພຣະຍາ ພົມມະເວຊພິທັກ (ອາຈານ ພູມີ ໄຊຍະສິດ) ຜູ້ ເປັນ (ຫົວໜ້າພຼາມມະຫາຣາຊຄູ) ຜູ້ກໍາກັບຣາຊພິທີມົນທຽນບານຫລວງ ໃນພຣະບໍຣົມມະຫາຣາຊວັງ ນະຄອນຫລວງພຣະບາງ ຊຶ່ງເປັນຜູ້ໄດ້ເລົ່າເຣື້ອງຣາວຕ່າງໆ ຢ່າງຫຍໍ້ໆ ນີ້ໃຫ້ຂ້າພະເຈົ້າຟັງໃນປີ 1965 ແລະຂ້າພະເຈົ້າເອັງ ໄດ້ຄົ້ນຄວ້າອ່ານ ຕາມບັນທຶກຕ່າງໆ ເພື່ອຊອກຫາ ວັນ ເດືອນ ປີ ທີ່ແນ່ນອນ ຕາມບັນທຶກປະວັດສາດລາວ ສນັ້ນ ຫາກພໍ່ແມ່ ພີ່ນ້ອງແລະທ່ານຜູ້ ມີກຽດ ຫາກໄດ້ຮູ້ ໄດ້ຊາບ ຣາຍລະອຽດກວ່ານີ້ ກໍ່ຂໍໃຫ້ແນະນໍາແກ່ຂ້າພະເຈົ້າດ້ວຍ ແລະ ໃຫ້ອະໄພໃຫ້ຂ້າພະເຈົ້າດ້ວຍ ຫາກການບັນທຶກ ວັນ ເດືອນ ປີ ທີ່ຜິດ.

ນະຄອນ ປາຣີ ວັນທີ 1 ພຶສຈິກາ 1990.

(ພຣະຍາ ຕຸມພັນ ໄຊຍະສິດ)

# Bref historique de Phrabang

# Palladium du Laos

**(Extrait des Mémoires de Phagna Houmphanh SAIGNASITH )**

PHRABANG est une Statue de Bouddha "en or massif" ( en fait un alliage à 3 composants mais de prédominence or) représentant le " Très Vénéré" en position debout avec les 2 bras levés en avant et pliés à mi-corps, les mains ouvertes au niveau de l'épaule, avec les paumes en avant".

Son poids est d'environ 48 Kg (voir note 1) et sa taille est d'environ 83 cm de hauteur. Prabang fut un cadeau offert au Roi Khmer, Indravarman 1er, le bâtisseur d'Angkor, par un Roi de Langka, Ceylan ou l'actuel Sri Lanka, au début du 9è siècle ( en l'an 806* voir note en compléments d'information à la fin).

Dans les années 30 à 40 lors de la fête du Nouvel An Lao, je me souviens qu'une fois par an (au mois d'avril quand Phrabang était encore à Vat Mai) le Palladium était descendu de son piédestal pour être exposé dans un grand "Pham" (genre de chapiteau) dans la cour de la pagode afin que la population entière puisse faire, pendant 24 heures, son "devoir religieux": l'arroser d'eau parfumée de fleurs odorantes et lui offrir des cierges, des encens et des fleurs pour recevoir ses divines bénédictions.

Habituellement c'était. mon père et mon oncle qui furent les seuls autorisés à porter le Phrabang de son piedestal au "Pham" sur un Phraxat en bois sculpté doré où arrivent deux conduites d'eau "Hang Line" en forme de Nagga ( Serpent ou Dragon mythologique) et par où arrive l'eau d'arrosage. A deux sur leur épaule, mon père et mon oncle, supportent très bien le poids de Phrabang! C'est dire que quand Phrabang "veuille" bien, il est devenu léger!

Après le transfert de Phrabang au Palais Royal en 1941, les mêmes "cérémonies d'arrosage" continuent à être pratiquées à la Pagode Vat Mai et pour l'amener du Palais à Vat Mai et vice versa, un somptueux cortège plein de cérémonial est organisé chaque année...

---

**Note (1)** *Selon certain écrit. Phrabang était appelé auparavant, Phra "Ham Gnât" ( Défense de disputer, de prendre par la force ?). Phrabang mesure 2 coudées et une pouce de haut et pèse 42 "Xang" et 1 "Tamlung" ( 1 Xang # 1 Kg, mais 1 Tamlung = ? ) En fait, le vrai poids de Phrabang n'est pas connu exactement car il serait "variable"! Des fois, on le soulève très facilement, d'autres fois, il est impossible de le soulever même à plusieurs per-sonnes!... Pour connaître ce poids de 48 Kg (?) il avait fallu faire des cérémonies spéciales de "demande d'autorisation" selon certains rites, ceux là même qu'on devait faire chaque fois quand on voulait déplacer la Statue*

## *I - L'Origine de PHRABANG*

Phrabang donné au Royaume du LANE XANG en 1355 par le Roi Khmer d'ANGKOR, PARAMANTHA KHEMMARAJA.

Le Roi khmer Paramantha Khemmaraja, pour modérer son gendre, Tiao Fa Là Thorani Maharaj Fa Ngum ( Note 2), Roi du Lane Xang, guerrier, conquérant et despotique, avait envoyé au Pays Lao, une mission cambodgienne composée, selon les écrits et annales divers, de :

- 20 érudits religieux
- 3 lettrés et savants: Norasinh, Noradet et Norasat
- 3000 maitres, artisans et ouvriers d'art spécialisés: bâtisseurs, mouleurs, forgerons, sculpteurs, orfèvres, tisserands et artistes:
  danseurs, musiciens, chanteurs et comédiens c'est-à-dire l'équivalent de la population entière khmère de quatre Villages, environ 5000 personnes.
